# ບໍລິສັດ ບີແວັກລາວ

# ຄູ່ມືການນຳໃຊ້ ລະບົບແຈ້ງພາສີປະຕູດຽວແຫ່ງຊາດ

LAO NATIONAL SINGLE WINDOW

| ຂັ້ນຕອນການນຳໃຊ້: | |
|---|---|
| ✓ ຂັ້ນຕອນການສ້າງໃບສະເໜີ ເພື່ອຂໍໃບອະນຸຍາດ<br>✓ ຂັ້ນຕອນການຂໍສະເໜີຕໍ່ອາຍຸໃບອະນຸຍາດ | |
| **ໂມດູລ໌:** | **ຄູ່ມືນີ້ໃຊ້ສະເພາະ:** |
| ໃບອະນຸຍາດ | ✓ ບັນດາຜູ້ນຳເຂົ້າ / ຜູ້ສົ່ງອອກ / Economic Operator<br>✓ ບັນດາຜູ້ບໍລິການແຈ້ງພາສີ (ຊິບປິ້ງ) |
| **ເລກທີ:** | |
| BIVACLAO.VTE.US.IN.03 | |
| **ເວີຊັ່ນ:** | **ວັນທີສ້າງ:** |
| 4.7 | ວັນຈັນ, ວັນທີ 29 ເດືອນຕຸລາ ປີ 2018 |

## ສາລະບານ

ພາກນຳສະເໜີ....3

ຕິດຕໍ່ພົວພັນຫາ ບໍລິສັດບີແວັກລາວໄດ້ທີ່:....3

ໜ້າທີ່ ແລະ ການອະທິບາຍຄຳສັບ....3

ສັນຍາລັກປຸ່ມຕ່າງໆ ໃນລະບົບ LNSW....4

ພາກສ່ວນທີ່ສາມາດດຳເນີນການສະເໜີຂໍໃບອະນຸຍາດ ແລະ ສະເໜີຂໍຕໍ່ອາຍຸໃບອະນຸຍາດ....5

ຜູ້ທີ່ຈະນຳໃຊ້ລະບົບ LNSW ຕ້ອງກະກຽມ....5

I. ການສ້າງໃບສະເໜີ ເພື່ອຂໍໃບອະນຸຍາດ....6

ຂັ້ນຕອນໃນການຂໍໃບອະນຸຍາດນຳເຂົ້າ....6

II. ການແຈ້ງເຕືອນ....11

1. ການແຈ້ງເຕືອນເມື່ອໃບສະເໜີຂໍອະນຸຍາດຂອງທ່ານໄດ້ສົ່ງໄປຫາກະຊວງທີ່ກ່ຽວຂ້ອງແລ້ວ....11

2. ການແຈ້ງເຕືອນເມື່ອໃບສະເໜີຂໍອະນຸຍາດຂອງທ່ານໄດ້ຖືກອະນຸມັດຈາກກະຊວງທີ່ກ່ຽວຂ້ອງແລ້ວ....11

3. ການແຈ້ງເຕືອນເມື່ອໃບສະເໜີຂໍໃບອະນຸຍາດ ໄດ້ຖືກປະຕິເສດຈາກກະຊວງທີ່ກ່ຽວຂ້ອງ....13

III. ການດັດແກ້ໃບສະເໜີຂໍໃບອະນຸຍາດ....14

IV. ການຂໍໃບອະນຸຍາດດ້ານເຕັກນິກ / Vehicle Technical Import License....16

ຂັ້ນຕອນການສະເໜີຂໍໃບອະນຸຍາດດ້ານເຕັກນິກ....16

V. ການຕໍ່ອາຍຸໃບອະນຸຍາດນຳເຂົ້າ / Import License....21

ຂັ້ນຕອນການຕໍ່ອາຍຸໃບອະນຸຍາດ....22

VI. ການມອບສິດ ໃຫ້ຕົວແທນເປັນຜູ້ດຳເນີນການແຈ້ງເພື່ອຊຳລະ ແລະ ແຈ້ງປ່ອຍສິນຄ້າອອກສາງError! Bookmark not defined.

ຂັ້ນຕອນການປະຕິບັດ:....Error! Bookmark not defined.

## ພາກນໍາສະເໜີ

ປື້ມຄູ່ມືການນໍາໃຊ້ສະບັບນີ້ ເປັນເອກະສານທີ່ສ້າງຂຶ້ນເພື່ອຊ່ວຍໃຫ້ຜູ້ນໍາເຂົ້າ / ຜູ້ສົ່ງອອກ ຫລື ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ມີຄວາມ ເຂົ້າໃຈໃນການນໍາໃຊ້ລະບົບແຈ້ງພາສີປະຕູດຽວແຫ່ງຊາດ (LNSW) ແລະ ແລກປ່ຽນຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງເຂົ້າໃນຂັ້ນ ຕອນການຂໍໃບອະນຸຍາດແບບເອເລັກໂທຣນິກໂດຍຜ່ານລະບົບ LNSW.

ໃນປື້ມຄູ່ມືການນໍາໃຊ້ລະບົບ LNSW, ຜູ້ນໍາໃຊ້ຈະໄດ້ຮູ້ ແລະ ເຂົ້າໃຈກ່ຽວກັບໜ້າທີ່ການນໍາໃຊ້ປຸ່ມຕ່າງໆ ທີ່ນອນໃນລະບົບ LNSW ນີ້.

ປື້ມຄູ່ມືການນໍາໃຊ້ສະບັບນີ້ ເປັນເອກະສານອ້າງອີງອີກໜຶ່ງສະບັບເພື່ອຊ່ວຍໃຫ້ຜູ້ນໍາເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ມີຄວາມເຂົ້າໃຈກ່ຽວກັບຂັ້ນຕອນ ແລະ ຂະບວນການນໍາໃຊ້ລະບົບເຂົ້າໃນການຂໍໃບອະນຸຍາດ ທາງເອເລັກ ໂທຣນິກໂດຍຜ່ານລະບົບ LNSW ນີ້ ຕັ້ງແຕ່ເລີ່ມຕົ້ນຈົນຈົບ.

## ຕິດຕໍ່ພົວພັນຫາ ບໍລິສັດບີແວັກລາວໄດ້ທີ່:




## ໜ້າທີ່ ແລະ ການອະທິບາຍຄໍາສັບ

| ອັກສອນຫຍໍ້ | ອະທິບາຍຄໍາສັບ |
|---|---|
| LNSW | ລະບົບແຈ້ ງພາສີປະຕູດຽວແຫ່ ງຊາດ |
| EO | ຜູ້ນໍາເຂົ້າ / ຜູ້ສົ່ງອອກ |

| | |
|---|---|
| Shipping Agent | ຜູ້ບໍລິການແຈ້ງພາສີ (ຊິບປິ້ງ), ຜູ້ທີ່ມີສິດດຳເນີນງານໂດຍໄດ້ຮັບມອບໝາຍຈາກເຈົ້າຂອງສິນຄ້າ. |
| MoIC / ກອຄ | ກະຊວງອຸດສະຫາກຳ ແລະ ການຄ້າ |
| DIMEX / ກຂອ | ກົມການນຳເຂົ້າ ແລະ ສົ່ງອອກ |
| MoPWT / ຍທຂ | ກະຊວງໂຍທາທິການ ແລະ ຂົນສົ່ງ |
| DOT / ກຂສ | ກົມຂົນສົ່ງ |
| Pending / ລໍຖ້າດຳເນີນການ | ໃບສະເໜີຂໍໃບອະນຸຍາດ ທີ່ຍັງລໍໃຫ້ໜ່ວຍງານທີ່ກ່ຽວຂ້ອງອອກໃບອະນຸຍາດ, ກຳລັງລໍຖ້າການກວດກາ ແລະ ອະນຸມັດ |
| Active / ນຳໃຊ້ໄດ້ | ໄດ້ຮັບການອະນຸມັດແລ້ວ:ໜ່ວຍງານອອກໃບອະນຸຍາດໄດ້ອອກໃບອະນຸຍາດໃຫ້ແລ້ວ ແລະ ຜູ້ນຳເຂົ້າ / ຜູ້ສົ່ງອອກ ແມ່ນສາມາດນຳໃຊ້ໄດ້ |
| Permit rejected for amendment / ໃບສະເໜີຂໍໃບອະນຸຍາດຖືກປະຕິເສດໃຫ ແກ ໄຂຄືນ | ໃບສະເໜີຂໍໃບອະນຸຍາດທີ່ໜ່ວຍງານອອກໃບອະນຸຍາດທີ່ກ່ຽວຂ້ອງໄດ້ປະຕິເສດ ເນື່ອງຈາກຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງ ຫລື ໃບສະເໜີບໍ່ຖືກຕ້ອງ. |
| Expired / ໝົດອາຍຸການນຳໃຊ້ | ໃບອະນຸຍາດທີ່ໝົດອາຍຸການນຳໃຊ້ແລ້ວ |
| Consumed / ຖືກນຳໃຊ້ | ໃບອະນຸຍາດ ໄດ້ຖືກນຳໃຊ້ໝົດແລ້ວ |

## ສັນຍາລັກປຸ່ມຕ່າງໆ ໃນລະບົບ LNSW

| ຊື່ສັນຍາລັກ | ເປັນຮູບພາບ | ຄຳອະທິບາຍ |
|---|---|---|
| ລະຫັດຜູ້ນຳໃຊ້ (L) |   | ໝາຍເຖິງລະຫັດຂອງເຈົ້າໜ້າທີ່ຂອງພາກລັດ, ພະນັກງານຂອງທະນາຄານ ແລະ ພະນັກງານຂອງ LNSW |
| ລະຫັດຜູ້ນຳໃຊ້ (E) |   | ໝາຍເຖິງລະຫັດຂອງຜູ້ປະກອບການ ຝ່າຍເອກະຊົນ |
| **ໜ້າຫລັກ** |   | ປຸ່ມໜ້າຫລັກ: ກົດໃສ່ປຸ່ມນີ້ເພື່ອກັບໄປສູ່ໜ້າຫລັກຂອງລະບົບ |
| **ອອກຈາກລະບົບ** |   | ປຸ່ມອອກຈາກລະບົບ: ກົດໃສ່ປຸ່ມນີ້ເພື່ອອອກຈາກລະບົບ |
| **ໂມດູລ໌ການອອກໃບອະນຸຍາດ** |   | ໂມດູນເພື່ອເຂົ້າຫາຂັ້ນຕອນການອອກໃບອະນຸຍາດເອເລັກໂທຣນິກ |
| **ຄົ້ນຫາ** |  | ປຸ່ມຄົ້ນຫາ: ນຳໃຊ້ເພື່ອຄົ້ນຫາໃບສະເໜີຂໍໃບອະນຸຍາດ, ໃບຢັ້ງຢືນ ແລະ ໃບອະນຸຍາດເພີ່ມໃນໜ້າຈໍການດຳເນີນກິດຈະກຳທີ່ກ່ຽວຂ້ອງພາຍໃນລະບົບ |
| **ສະເໜີຂໍໃບອະນຸຍາດ** |  | ການຮ່າງໃບສະເໜີເພື່ອຂໍໃບອະນຸຍາດຈາກກະຊວງທີ່ກ່ຽວຂ້ອງ |

| | | |
|---|---|---|
| **ເປີດເບິ່ງລາຍລະອຽດ** |  | ເປີດເບິ່ງລາຍລະອຽດ:<br>ກົດໃສ່ປຸ່ມນີ້ເພື່ອກວດກາເບິ່ງຂໍ້ມູນທັງໝົດໄດ້ |
| **ປຸ່ມສົ່ງ** |  | ປຸ່ມສົ່ງ: ກົດໃສ່ປຸ່ມນີ້ເພື່ອສົ່ງໃບສະເໜີ ໄປຫາໜ່ວຍງານທີ່ກ່ຽວຂ້ອງ ເພື່ອດຳເນີນການອະນຸມັດ ແລະ ອອກໃບອະນຸຍາດໃຫ້ |
| **ຈຳເປັນຕ້ອງມີ** |  | ເຄື່ອງໝາຍນີ້: ເປັນເຄື່ອງໝາຍທີ່ຈະສະແດງໃຫ້ຜູ້ນຳໃຊ້ຮູ້ວ່າຂໍ້ມູນໃນຫ້ອງທີ່ມີເຄື່ອງໝາຍນີ້ຈຳເປັນຕ້ອງຕື່ມໃສ່ເພື່ອເຮັດໃຫ້ຂັ້ນຕອນການສະເໜີຂໍອະນຸຍາດສຳເລັດ |
| **ລາຍການກິດຈະກຳທີ່ຕ້ອງເຮັດ** |  | ວຽກງານທັງໝົດທີ່ຕ້ອງໄດ້ດຳເນີນການສາມາດຊອກຫາໄດ້ໃນລາຍການກິດຈະກຳທີ່ຕ້ອງເຮັດ |
| **ພິມ** |  | ກົດໃສ່ປຸ່ມນີ້ເພື່ອເບິ່ງ/ດາວໂຫລດໃບອະນຸຍາດ/ໃບຢັ້ງຢືນ |
| **ການບັນທຶກຂັ້ນຕອນຕ່າງໆຂອງກິດຈະກຳ** |  | ກົດປຸ່ມນີ້ເພື່ອຕິດຕາມ ແລະ ເບິ່ງປະຫວັດຂັ້ນຕອນການດຳເນີນການອະນຸມັດໃບອະນຸຍາດ |
| **ດຳເນີນການ** |  | ກົດປຸ່ມນີ້ເພື່ອດຳເນີນການອະນຸມັດ ຫລື ແກ້ໄຂໃບສະເໜີ ຖ້າຈຳເປັນ |
| **ຕໍ່ອາຍຸໃບອະນຸຍາດ** |  | ຕໍ່ອາຍຸໃບອະນຸຍາດ |

## ພາກສ່ວນທີ່ສາມາດດຳເນີນການສະເໜີຂໍໃບອະນຸຍາດ ແລະ ສະເໜີຂໍຕໍ່ອາຍຸໃບອະນຸຍາດ

| ພາກສ່ວນ | ສະເໜີຂໍໃບອະນຸຍາດ | ສະເໜີຂໍຕໍ່ອາຍຸໃບອະນຸຍາດ |
|---|---|---|
| ຜູ້ນຳເຂົ້າ / ຜູ້ສົ່ງອອກ | ✓ | ✓ |
| ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) | ✓ | ✓ |

## ຜູ້ທີ່ຈະນຳໃຊ້ລະບົບ LNSW ຕ້ອງກະກຽມ

- ຕ້ອງມີຄວາມຮູ້ພື້ນຖານກ່ຽວກັບຄອມພິວເຕີ ແລະ ຄອມພິວເຕີດັ່ງກ່າວນັ້ນຕ້ອງມີ PDF ຊອຟແວຣ໌,
- ຕ້ອງມີ User ID ຜູ້ໃຊ້ ແລະ ລະຫັດຜ່ານ, ຊຶ່ງທີມງານ LNSW ຈະເປັນຜູ້ສ້າງໃຫ້,
- ມີສັນຍານ ແລະ ເຊື່ອມຕໍ່ອິນເຕີເນັດ,

## I. ການສ້າງໃບສະເໜີ ເພື່ອຂໍໃບອະນຸຍາດ

### ຂັ້ນຕອນໃນການຂໍໃບອະນຸຍາດນໍາເຂົ້າ

ໃຫ້ທ່ານປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1. ເຂົ້າສູ່ລະບົບດ້ວຍ https://pp.laonsw.net
2. ປ້ອນເລກລະຫັດ ID ຜູ້ນໍາໃຊ້ໃສ່
3. ປ້ອນລະຫັດຜ່ານໃສ່
4. ປ້ອນຜົນການບວກເລກໃສ່ (ຜົນການບວກເລກນັ້ນຈະແຕກຕ່າງກັນ ທຸກຄັ້ງເມື່ອມີການເຂົ້າສູ່ລະບົບ)
5. ກົດໃສ່ປຸ່ ມ "OK" ເພື່ອເຂົ້າສູ່ລະບົບ




6. ກົດໃສ່ ໂມດູລ໌ການອອກໃບອະນຸຍາດ




7. ກົດໃສ່ "ໃບອະນຸຍາດທີ່ຄົ້ນຫາໄດ້".
8. ກົດປຸ່ມ "ຂໍໃບອະນຸຍາດ " ເພື່ອເລີ່ມຕົ້ນ ປະກອບຂໍ້ມູນການສະເໜີຂໍໃບອະນຸຍາດ




9. ກົດໃສ່ປຸ່ມທີ່ເປັນເຄື່ອງໝາຍບວກສີຂຽວ ແລະ ປ້ອນລະຫັດສິນຄ້າໃສ່.
10. ເລືອກປະເພດການດຳເນີນການຄ້າ
11. ກົດໃສ່ປຸ່ມ "ກວດເບິ່ງໃບອະນຸຍາດທີ່ຈຳເປັນຕ້ອງມີ"




12. ກົດສອງຄັ້ງໃສ່ກະຊວງທຳອິດ




13. ເລືອກກົມທີ່ອອກໃບອະນຸຍາດນີ້ ແລະ ເລືອກດ່ານພາສີທີ່ຈະນຳສິນຄ້າເຂົ້າມາ.




14. ຕື່ມຂໍ້ມູນຂອງຜູ້ສົ່ງອອກໃສ່ / Consignor.




15. ຕື່ມເລກທີປະຈຳຕົວຜູ້ເສຍອາກອນຂອງຂອງຜູ້ນຳເຂົ້າ / ຜູ້ສົ່ງອອກ ຫຼື ຜູ້ບໍລິການແຈ້ງພາສີ (ຊິບປີ້ງ). ຫລັງຈາກນັ້ນ ລະບົບຈະດຶງຂໍ້ມູນ ທັງໝົດໃນລະບົບອອກມາເຊັ່ນ; ຊື່ບໍລິສັດ, ຜູ້ນຳໃຊ້, ທີ່ຢູ່, ເບີໂທ, ເບີແຟັກ, ອີເມວ.




16. ເລືອກລະບອບພາສີ ແລະ ປະເພດຂອງການນຳເຂົ້າ

17. ປ້ອນລາຍລະອຽດຂອງສິນຄ້າ, ຂໍ້ມູນ ຈຳນວນປະລິມານ, ມູນຄ່າຕໍ່ຫົວໜ່ວຍ ແລະ ສະກຸນເງິນຂອງສິນຄ້າໃສ່.




18. ເອກະສານທີ່ຈຳເປັນ (ເອກະສານທີ່ກ່ຽວຂ້ອງ) ທີ່ຕ້ອງອັບໂຫລດລົງໃນລະບົບເຊັ່ນ;

- ✓ ໃບອິນວອຍ / Invoices
- ✓ ໃບລາຍການຫຸ້ມຫໍ່ສິນຄ້າ / Packing List
- ✓ ໃບມອບສິດ / Letter of Attorney (ກໍລະນີ ທ່ານເປັນຜູ້ບໍລິການແຈ້ງພາສີ (ຊິບປີ້ງ) ເທົ່ານັ້ນ).




19. ກົດໃສ່ປຸ່ມ "ສົ່ງ", ຫລັງຈາກກົດໃສ່ "ປຸ່ມສົ່ງ" ແລ້ວ, ໃບສະເໜີຂໍໃບອະນຸຍາດຂອງທ່ານຈະຖືກສົ່ງໄປຫາໜ່ວຍງານທີ່ອອກໃບອະນຸຍາດໂດຍອັດຕະໂນມັດ (ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສະຫາກໍາ ແລະ ການຄ້າ) ເພື່ອດໍາເນີນການ ອະນຸມັດຕໍ່ໄປ.

**<u>ໝາຍເຫດ:</u>**

ກ່ອນຈະສົ່ງໃບສະເໜີຂໍໃບອະນຸຍາດ, ຜູ້ນໍາເຂົ້າ / ຜູ້ສົ່ງອອກ ຫລື ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ຕ້ອງກວດກາທຸກຂໍ້ມູນ, ທຸກເອກະສານທີ່ຄັດຕິດມານີ້ ໃຫ້ລະອຽດ, ເຫັນວ່າຖືກຕ້ອງແລ້ວຈຶ່ງກົດໃສ່ຄໍາສັ່ງສົ່ງອອກ.




20. ຂໍ້ຄວາມຂ້າງລຸ່ມນີ້ຈະປະກົດຂຶ້ນຫລັງຈາກທີ່ທ່ານກົດປຸ່ມ "ສົ່ງ". ຜູ້ນໍາເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ການຕ້ອງໄດ້ຢືນຢັນການສົ່ງໂດຍກົດໃສ່ປຸ່ມ <u>"OK"</u>.




21. ຫຼັງຈາກກົດໃສ່ ປຸ່ມ <u>OK</u> ຕາມທີ່ໄດ້ລະບຸໄວ້ຂ້າງເທິງນັ້ນແລ້ວ, ລະບົບຈະຢືນຢັນ ແລະ ສະແດງຂໍ້ຄວາມທີ່ບອກວ່າ **<u>"ລະບົບໄດ້ທໍາການບັນທຶກຂໍ້ມູນໄວ້ຮຽບຮ້ອຍແລ້ວ"</u>** ຂຶ້ນມາ ເພື່ອແຈ້ງໃຫ້ທ່ານຮັບຊາບ. ແລະ ໃນຄະນະດຽວກັນນັ້ນລະບົບ ກໍ່ຈະສະແດງເລກທີຂອງໃບສະເໜີຂຶ້ນມາທີ່ໜ້າຈໍເປັນ (ເລກລະຫັດຂອງໃບສະເໜີຈະເປັນ**<u>ຕົວເລກ</u>**), ນັ້ນກໍ່ໝາຍ ຄວາມວ່າໃບສະເໜີຂອງທ່ານໄດ້ສົ່ງໄປຫາໜ່ວຍງານ

ຂະແໜງການລັດ (ພາກສ່ວນທີ່ກ່ຽວຂ້ອງເປັນທີ່ຮຽບຮ້ອຍແລ້ວ) ຄື ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.




22. ຖ້າທ່ານຕ້ອງການກວດເບິ່ງຂໍ້ມູນຕ່າງໆທີ່ໄດ້ສົ່ງໄປຍັງໜ່ວຍງານອອກໃບອະນຸຍາດທີ່ກ່ຽວຂ້ອງແລ້ວ, ທ່ານສາມາດກົດເລືອກໃບສະເໜີຂໍໃບອະນຸຍາດຂອງທ່ານແລ້ວກົດໃສ່ ປຸ່ມສະແດງຂໍ້ມູນ, ແລ້ວລະບົບກໍ່ຈະສະແດງຂຶ້ນມາໜ້າຈໍພ້ອມດ້ວຍຂໍ້ມູນທີ່ທ່ານໄດ້ປະກອບໄປແລ້ວນັ້ນ.






## II. ການແຈ້ງເຕືອນ

### 1. ການແຈ້ງເຕືອນເມື່ອໃບສະເໜີຂໍອະນຸຍາດຂອງທ່ານໄດ້ສົ່ງໄປຫາກະຊວງທີ່ກ່ຽວຂ້ອງແລ້ວ

ພາຍຫຼັງທ່ານໄດ້ສົ່ງໃບສະເໜີຂໍໃບອະນຸຍາດຂອງທ່ານແລ້ວ, ທ່ານຈະໄດ້ຮັບອີເມວແຈ້ງເຕືອນໃຫ້ຊາບ ແລະ ຈະມີຂໍ້ມູນດັ່ງນີ້; (ເລກທີໃບສະເໜີຂໍອະນຸຍາດ, ຊື່ໃບອະນຸຍາດ, ກະຊວງໃບອະນຸຍາດ ແລະ ກົມໃບອະນຸຍາດ)

**noreply@laonsw.net** <noreply@laonsw.net>

To:touyangnyiayer@yahoo.com

Sep 12 at 11:35 AM

ສະບາຍດີທ່ານ ບໍລິສັດ

ອີເມວສະບັບນີ້ ໄດ້ສົ່ງຫາເພື່ອຢັ້ງຢືນໃຫ້ທ່ານຮັບຊາບວ່າ ກະຊວງທີ່ກ່ຽວຂ້ອງ ໄດ້ຮັບໃບສະເໜີຂໍອະນຸຍາດຂອງທ່ານແລ້ວ ແລະ ຈະແຈ້ງໃຫ້ທ່ານຮັບຮູ້ວ່ານີ້ແມ່ນສົ່ງໃບສະເໜີຂໍອະນຸຍາດເທົ່ານັ້ນ ຊຶ່ງບໍ່ໄດ້ໝາຍຄວາມວ່າໃບສະເໜີຂອງທ່ານຈະໄດ້ຮັບການອະນຸມັດທັນທີ.

ລາຍລະອຽດໃບສະເໜີຂໍອະນຸຍາດ ມີດັ່ງລຸ່ມນີ້:

| I. ຂໍ້ມູນຂອງຜູ້ຮັ | ID ໃບສະເໜີຂໍອະນຸຍາດ | ຊື່ໃບອະນຸຍາດ | ກະຊວງອອກໃບອະນຸຍາດ | ກົມອອກໃບອະນຸຍາດ |
|---|---|---|---|---|
| 1 | 10822 | ໃບອະນຸຍາດນຳເຂົ້າ (ເຄື່ອງກົນຈັກໜັກ ແລະ ຍານພາຫະນະ) | ກະຊວງອຸດສາຫະກຳ ແລະ ການຄ້າ | ກົມການນຳເຂົ້າ ແລະ ສົ່ງອອກ |

ຂໍຂອບໃຈ!

ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ

ຕຶກຂຽວ, ຊັ້ນ 3

ໜ່ວຍ 41, ເຮືອນເລກທີ 429

ບ້ານນາໄຊ, ເມືອງໄຊເສດຖາ

ນະຄອນຫລວງວຽງຈັນ, ສປປ ລາວ

ຈຸດປະສົງຂອງການສົ່ງອີເມວສະບັບນີ້ ແມ່ນເພື່ອແຈ້ງໃຫ້ທ່ານຮັບຊາບວ່າໃບສະເໜີຂໍໃບອະນຸຍາດຂອງທ່ານໄດ້ຖືກສົ່ງໄປຫາໜ່ວຍງານຂະແໜງການລັດ (ພາກສ່ວນທີ່ກ່ຽວຂ້ອງເປັນທີ່ຮຽບຮ້ອຍແລ້ວ) ຄື ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

### 2. ການແຈ້ງເຕືອນເມື່ອໃບສະເໜີຂໍອະນຸຍາດຂອງທ່ານໄດ້ຖືກອະນຸມັດຈາກກະຊວງທີ່ກ່ຽວຂ້ອງແລ້ວ

ຜູ້ນຳເຂົ້າ / ຜູ້ສົ່ງອອກກໍ່ຈະໄດ້ຮັບອີເມວແຈ້ງເຕືອນ ຫຼັງຈາກໃບອະນຸຍາດໄດ້ຮັບການອະນຸມັດຈາກ ໜ່ວຍງານຂະແໜງການລັດ (ພາກສ່ວນທີ່ກ່ຽວຂ້ອງເປັນທີ່ຮຽບຮ້ອຍແລ້ວ) ຄື ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

**noreply@laonsw.net** <noreply@laonsw.net>

To:touyangnyiayer@yahoo.com

Sep 12 at 12:15 PM

ສະບາຍດີທ່ານ ບໍລິສັດ

ອີເມວສະບັບນີ້ ສົ່ງມາເພື່ອແຈ້ງໃຫ້ທ່ານຊາບວ່າ ໃບສະເໜີຂໍອະນຸຍາດຂອງທ່ານທີ່ສົ່ງມານັ້ນໄດ້ຮັບການອະນຸມັດແລ້ວ. ທ່ານສາມາດປິ້ນອອກ ແລະ ດາວໂຫລດຈາກລະບົບ LNSW ໄດ້ > ທ່ານສາມາດຄົ້ນຫາໄດ້ທີ່ ໜ້າສະແດງໃບອະນຸຍາດ.

ລາຍລະອຽດ ໃບອະນຸຍາດ ດັ່ງລຸ່ມນີ້:

| ເລກລຳດັບທີ. | ID ໃບສະເໜີຂໍອະນຸຍາດ | ເລກທີໃບອະນຸຍາດ | | ກະຊວງອອກໃບອະນຸຍາດ | ກົມອອກໃບອະນຸຍາດ |
|---|---|---|---|---|---|
| 1 | 10825 | 00100323 | ໃບອະນຸຍາດນຳເຂົ້າ (ເຄື່ອງກົນຈັກໜັກ ແລະ ຍານພາຫະນະ) | ກະຊວງອຸດສາຫະກຳ ແລະ ການຄ້າ | ກົມການນຳເຂົ້າ ແລະ ສົ່ງອອກ |

ໃນຂະນະດຽວກັນ, ກະລຸນາສືບຕໍ່ຍື່ນໃບສະເໜີຂໍອະນຸຍາດຕໍ່ໄປນີ້ທີ່ກ່ຽວຂ້ອງກັບກິດຈະການຂອງທ່ານ:

| ເລກລຳດັບທີ. | ລາຍລະອຽດຂອງລະຫັດສິນຄ້າ | ໃບອະນຸຍາດທີ່ຈຳເປັນຕ້ອງມີ | ກະຊວງອອກໃບອະນຸຍາດ |
|---|---|---|---|
| 1 | 8711101200 | ໃບອະນຸຍາດນຳເຂົ້າ (ເຄື່ອງກົນຈັກໜັກ ແລະ ຍານພາຫະນະ) | ກະຊວງອຸດສາຫະກຳ ແລະ ການຄ້າ |

ຂໍຂອບໃຈ!

ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ
ຕຶກຂຽວ, ຊັ້ນ 3
ໜ່ວຍ 41, ເຮືອນເລກທີ 429
ບ້ານນາໄຊ, ເມືອງໄຊເສດຖາ
ນະຄອນຫລວງວຽງຈັນ, ສປປ ລາວ

**ໝາຍເຫດ:**

ຖ້າຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ຜູ້ສົ່ງອອກຕ້ອງການກວດເບິ່ງໃບອະນຸຍາດເອເລັກໂຕຣນິກທີ່ໄດ້ຮັບ ການອະນຸມັດແລ້ວ, ທ່ານກໍ່ສາມາດເຂົ້າສູ່ ລະບົບແຈ ້ງພາສີປະຕູດຽວແຫ່ ງຊາດ ແລະ ຄົ້ນຫາ:

1. ປ້ອນເລກທີໃບອະນຸຍາດໃສ່ແລ້ວຈາກນັ້ນກໍກົດໃສ່ປຸ່ມ "ຄົ້ນຫາ"
2. ກົດໃສ່ລາຍການຂອງໃບອະນຸຍາດ.
3. ກົດໃສ່ປຸ່ມ "ພິມ" ເພື່ອດາວໂຫຼດ ແລະ ເປີດເບິ່ງໃບອະນຸຍາດນຳເຂົ້າຂອງທ່ານ




## ຕົວຢ່າງໃບອະນຸຍາດນຳເຂົ້າ / Import License

Lao People's Democratic Republic

Peace Independence Democracy Unity Prosperity

Ministry of Industry and Commerce

Department of Import and Export

DIMEX.IMEXDIV

Ref.no:00069094

Date:29/06/2018

**ໃບອະນຸຍາດນຳເຂົ້າ / Import License**

**I. Applicant Details**

Name: [illegible] Applicant 1777777777, Date: 29/06/2018

Address: Village: [illegible] District: [illegible] Province: [illegible]

Telephone or Fax: 020 23626265, 021

Email: nazatest1990@gmail.com

**II. Exporter Details**

Company:

Address: -

Country: Thailand

Telephone or Fax:

Email:

**III. End User Details**

Name: [illegible]

Address: [illegible]

Telephone or Fax: 020 23626265, 021

**IV. Import Details**

Import: IM7

Type of Import: 40

Reference Documents, in case of Exemption or Other:

Approval — Date:

Approval — Date:

Approval — Date:

| No. | Description of Goods | HS Code | [illegible] | [illegible] | Currency | Total Value |
|---|---|---|---|---|---|---|
| 1 | [illegible] 87.09). (8701) > - [illegible] (870120) > - - [illegible] (CKD) (8701201000) | 87012010 | 2.00 | 5000.00 | Lao kip | 10,000.00 |
| | | | | | Total | 10,000.00 |

| | |
|---|---|
| Customs Clearance Office | [illegible] |
| [illegible] | 29/09/2018 |
| Import License Extended until | |

Remark:

1. Submission of false information shall result in penalties.
2. [illegible] Do not alter or modify without authorization.

On behalf of Director General

Director General

BOULINHOM PHILAVONG

1

### 3. ການແຈ້ງເຕືອນເມື່ອໃບສະເໜີຂໍໃບອະນຸຍາດ <u>ໄດ້ຖືກປະຕິເສດ</u>ຈາກກະຊວງທີ່ກ່ຽວຂ້ອງ

ໜ່ວຍງານຂະແໜງການລັດ (ພາກສ່ວນທີ່ກ່ຽວຂ້ອງ) ຄື ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ. ຈະປະຕິເສດໄດ້ ເມື່ອພົບເຫັນຂໍ້ຜິດພາດໃດໜຶ່ງຢູ່ໃນໃບສະເໜີດັ່ງກ່າວນັ້ນເຊັ່ນ; ເອກະສານທີ່ຄັດຕິດມາກັບຊຸດດັ່ງກ່າວນັ້ນບໍ່ຖືກຕ້ອງ, ການປ້ອນຂໍ້ມູນບໍ່ຖືກຕ້ອງ ແລະ ອື່ນໆ ...

ເຈົ້າໜ້າທີ່ ຜູ້ທີ່ກ່ຽວຂ້ອງສາມາດມີຄຳເຫັນ ລະບຸລາຍລະອຽດໃສ່ອີກວ່າ; ບ່ອນໃດ, ເອກະສານໃດທີ່ມີຂໍ້ຜິດພາດ, ເພື່ອອຳນວຍ ຄວາມສະດວກໃຫ້ແກ່ຜູ້ນຳເຂົ້າ / ຜູ້ສົ່ງອອກຮັບຊາບ ແລະ ຮູ້ບ່ອນທີ່ຈະໄປດັດແກ້ແລ້ວຈຶ່ງສົ່ງ ໃບສະເໜີນັ້ນຄືນມາອີກໃໝ່.

**noreply@laonsw.net**
To :touyangnyiayer@yahoo.com
Sep 12 at 1:18 PM

ສະບາຍດີທ່ານ ບໍລິສັດ

ພວກເຮົາຂໍແຈ້ງໃຫ້ທ່ານຮັບຊາບວ່າ ກະຊວງທີ່ອອກໃບອະນຸຍາດໄດ້ປະຕິເສດ ຄໍາຮ້ອງເພື່ອຂໍດໍາໃບອະນຸຍາດທ່ານ. ກະລຸນາແກ້ໄຂຄໍາຮ້ອງຂອງທ່ານ ແລະ ສົ່ງໄປຫາກົມ-ກະຊວງທີ່ກ່ຽວຂ້ອງ ເພື່ອອອກໃບອະນຸຍາດໃຫ້ທ່ານອີກຄັ້ງ.
ໃບສະເໜີຂໍອະນຸຍາດທີ່ຖືກປະຕິເສດ:

| ເລກທີ. | ເລກທີໃບສະເໜີ ຂໍອະນຸຍາດ | ຊື່ໃບອະນຸຍາດ | ກະຊວງອອກໃບ | ກົມອອກໃບ | ເຫດຜົນທີ່ປະຕິເສດ | ໝາຍເຫດ |
|---|---|---|---|---|---|---|
| 1 | 10827 | ໃບອະນຸຍາດນໍາເຂົ້າ (ເຄື່ອງກົນຈັກໜັກ ແລະ ຍານພາຫະນະ) | ກະຊວງອຸດສາຫະກໍາ ແລະ ການຄ້າ | ກົມການນໍາເຂົ້າ ແລະ ສົ່ງອອກ | ໃບສະເໜີຂໍອະນຸຍາດ ບໍ່ແນະນໍາໃຫ້ອະນຸມັດ | ຄັດຕິດ ເອກະສານບໍ່ ຖືກຕ້ອງ |

ຂໍຂອບໃຈ!

ບໍລິສັດຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈໍາກັດ
ຕຶກຂຽວ, ຊັ້ນ 3
ໜ່ວຍ 41, ເຮືອນເລກທີ 429
ບ້ານນາໄຊ, ເມືອງໄຊເສດຖາ
ນະຄອນຫລວງວຽງຈັນ, ສປປ ລາວ

## III. ການດັດແກ້ໃບສະເໜີຂໍໃບອະນຸຍາດ

1. ຜູ້ນໍາເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ເຂົ້າສູ່ລະບົບໂດຍປະຕິບັດ ຕາມຂັ້ນຕອນທີ່ 1 ຫາທີ່ 5 (ໃນຂໍ້ I ທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ).
2. ແລ້ວ ກົດໃສ່ ໂມດູລ໌ "ໃບອະນຸຍາດ"




3. ກວດເບິ່ງ "ລາຍການກິດຈະກໍາທີ່ຕ້ອງເຮັດ" ຫຼື "DoTo List" ແລ້ວຊອກຫາເລກທີ່ຂອງໃບສະເໜີທີ່ຖືກປະຕິເສດນັ້ນ, ຈາກນັ້ນກົດ 2 ຄັ້ງໃສ່ໃບສະເໜີທີ່ຖືກປະຕິເສດນັ້ນ, ລະບົບຈະສົ່ງເລກທີ່ໃບສະເໜີທີ່ຖືກປະຕິເສດດັ່ງກ່າວນັ້ນເຂົ້າມາ ໃສ່ລາຍການ "ກິດຈະກໍາຂອງຂ້າພະເຈົ້າ" ຫຼື "My task"
4. ກົດ 2 ຄັ້ງໃສ່ໃບສະເໜີຢູ່ໃນລາຍການ "ກິດຈະກໍາຂອງຂ້າພະເຈົ້າ" ຫຼື "My task" ແລ້ວລະບົບຈະສະແດງຂຶ້ນມາໜ້າຈໍ, ຈາກນັ້ນທ່ານຕ້ອງກວດກາເບິ່ງ ແລະ ດັດແກ້ຄືນໃຫ້ຖືກຕ້ອງບ່ອນທີ່ທ່ານເຮັດຜິດຕາມທີ່ລະບຸໃນຊ່ອງ "ໝາຍເຫດ".






5. ພາຍຫຼັງການດັດແກ້ສຳເລັດແລ້ວ ທ່ານກໍ່ກົດໃສ່ປຸ່ມຄຳສັ່ງ  "ສົ່ງ" ເພື່ອສົ່ງກັບຄືນໄປຍັງໜ່ວຍງານ ອອກໃບອະນຸຍາດທີ່ກ່ຽວຂ້ອງ ເພື່ອອອກໃບອະນຸຍາດ.



## IV. ການຂໍໃບອະນຸຍາດດ້ານເຕັກນິກ / Vehicle Technical Import License

ໃບອະນຸຍາດທາງດ້ານເຕັກນິກນຳພາຫະນະ ແລະ ກົນຈັກເຂົ້າເພື່ອຂຶ້ນທະບຽນຢູ່ລາວແມ່ນອະນຸມັດໂດຍ ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ ງ.

ຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ຈະສາມາດຂໍໃບອະນຸຍາດດ້ານເຕັກນິກ ໄດ້ ກໍ່ຕໍ່ເມື່ອ ໃບອະນຸຍາດນຳເຂົ້າ ຂອງກົມການນຳເຂົ້ າ-ສົ່ ງອອກ, ກະຊວງ ອຸດສາຫະກຳ ແລະ ການຄ້ າ ໄດ້ຮັບການອະນຸມັດແລ້ວເທົ່ ານັ້ ນ.

### ຂັ້ນຕອນການສະເໜີຂໍໃບອະນຸຍາດດ້ານເຕັກນິກ

ຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ເຂົ້າສູ່ລະບົບໂດຍປະຕິບັດ ຕາມຂັ້ນຕອນທີ່ 1 ຫາທີ່ 5 (ໃນຂໍ້ I ທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ).

1. ກົດໃສ່ປຸ່ມ “ໃບອະນຸຍາດທີ່ຄົ້ນຫາໄດ້”.
2. ປ້ອນລະຫັດໃບອະນຸຍາດໃສ່ (ໃບອະນຸຍາດນຳເຂົ້າ ທີ່ອອກໃຫ້ໂດຍກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສະຫາກຳ ແລະ ການຄ້າ
3. ກົດໃສ່ປຸ່ມ “ຄົ້ນຫາ”.




4. ກົດເລືອກໃບອະນຸຍາດນຳເຂົ້າທີ່ໄດ້ຮັບການອະນຸມັດຈາກກົມການນຳເຂົ້າ-ສົ່ງອອກແລ້ວ (ໃນສະຖານະ “ນຳໃຊ້ໄດ້”)
5. ກົດໃສ່ປຸ່ມ “ຂໍໃບອະນຸຍາດເພີ່ມເຕີມ”.




6. ກົດໃສ່ “ໃບອະນຸຍາດເພີ່ມເຕີມ”
7. ເລືອກຫ້ອງການແຈ້ງພາສີ

8. ເລືອກກົມອະນຸມັດໃບອະນຸຍາດ ແລະ ປະເພດການນຳເຂົ້າ (ນຳເຂົ້າຖາວອນ ຫຼື ນຳເຂົ້າຊົ່ວຄາວ)
9. ປ້ອນຈຳນວນປະລິມານໃສ່




10. ກົດໃສ່ປຸ່ມ "ເພີ່ມລາຍລະອຽດຂອງສິນຄ້າ"




11. ຕື່ມຂໍ້ມູນຂອງສິນຄ້າ ທີ່ຈຳເປັນທັງໝົດໃສ່ (ເປັນຕົ້ນແມ່ນ ຍີ່ຫໍ້, ປະເພດ, ລຸ້ນ, ພວງມະໄລ, ຄວາມແຮງຈັກ, ຈຳນວນບ່ອນນັ່ງ, ຄວາມຍາວ, ຄວາມສູງ, ຄວາມກວ້າງ, ຈຳນວນສູບ, ຈຳນວນລໍ້, ປະເພດພະລັງງານ, ນໍ້າໜັກຂອງຍານພາຫະນະ ເລກຈັກ, ເລກຖັງ ແລະ ສີ).

**ໝາຍເຫດ:**

ກໍລະນີ ມີລົດຈຳນວນຫຼາຍຄັນ ແລະ ລົດຕ້ອງຢູ່ໃນມາດຖານອັນດຽວກັນ, ເລກລະຫັດພາສີອັນດຽວກັນ, ສະເປັກຂອງລົດ ແລະ ລຸ້ນດຽວກັນ ແບບນີ້ທ່ານສາມາດ ອັບໂຫລດເລກຈັກ, ເລກຖັງ ແລະ ສີລົດ ເປັນໄຟລ໌ Excel ເຂົ້າໃນລະບົບໄດ້ເລີຍ. ທັ້ງນີ້ ກໍ່ເພື່ອໃຫ້ການປະຕິບັດງານວ່ອງໄວ, ສະດວກ, ສະບາຍ, ອີກຢ່າງແມ່ນເພື່ອຫຼີກເວັ້ນຂໍ້ຜິດພາດຈາກການພິມດ້ວຍມື.

12. ຈາກນັ້ນ ກົດໃສ່ປຸ່ມ ບັນທຶກ 




| ເລກທີ | ເລກຈັກ | ເລກຖັງ | ສີ |
|---|---|---|---|
| 1 | JF72E-2101788000 | MLHJF72BXJ510179700 | BLV |
| 2 | JF72E-2101788001 | MLHJF72BXJ510179701 | BLV |
| 3 | JF72E-2101788002 | MLHJF72BXJ510179702 | BLV |
| 4 | JF72E-2101788003 | MLHJF72BXJ510179703 | BLV |
| 5 | JF72E-2101788004 | MLHJF72BXJ510179704 | BLV |
| 6 | JF72E-2101788005 | MLHJF72BXJ510179705 | BLV |
| 7 | JF72E-2101788006 | MLHJF72BXJ510179706 | BLV |
| 8 | JF72E-2101788007 | MLHJF72BXJ510179707 | BLV |
| 9 | JF72E-2101788008 | MLHJF72BXJ510179708 | BLV |
| 10 | JF72E-2101788009 | MLHJF72BXJ510179709 | BLV |
| 11 | JF72E-2101788010 | MLHJF72BXJ510179710 | BLV |
| 12 | JF72E-2101788011 | MLHJF72BXJ510179711 | BLV |
| 13 | JF72E-2101788012 | MLHJF72BXJ510179712 | BLV |
| 14 | JF72E-2101788013 | MLHJF72BXJ510179713 | BLV |
| 15 | JF72E-2101788014 | MLHJF72BXJ510179714 | BLV |
| 16 | JF72E-2101788015 | MLHJF72BXJ510179715 | BLV |
| 17 | JF72E-2101788016 | MLHJF72BXJ510179716 | BLV |

ນີ້ຄືແບບຟອມ Excel ທີ່ບັນຈຸລາຍລະອຽດດັ່ງນີ້;

- ✓ ເລກຈັກ,
- ✓ ເລກຖັງ,
- ✓ ແລະ ສີ.

## 13. ອັບໂຫຼດໃບອະນຸຍາດນຳເຂົ້າຂອງກະຊວງອຸດສາຫະກຳ ແລະ ການຄ້າໃສ່ໃນລະບົບ




14. ກົດໃສ່ປຸ່ມສົ່ງ ,

15. ກົດປຸ່ມ “ຕົກລົງ” ເພື່ອຢືນຢັນການສົ່ງ,




ຈາກນັ້ນທ່ານຈະສັງເກດເຫັນວ່າ:

1. “ການດຳເນີນງານສຳເລັດແລ້ວ” 

2. ເລກທີຂອງໃບສະເໜີເພື່ອຂໍໃບອະນຸຍາດ້ານເຕັກນິກ **(ເປັນໂຕເລກ)** ຈະສະແດງຂຶ້ນທີ່ໜ້າຈໍ, ຕົວຢ່າງ 

ນັ້ນໝາຍຄວາມວ່າ ໃບສະເໜີຂໍໃບອະນຸຍາດດ້ານເຕັກນິກໄດ້ຖືກສົ່ງໄປຫາກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຮຽບຮ້ອຍແລ້ວ.

16. ຫລັງຈາກ ກົມຂົນສົ່ງໄດ້ອະນຸມັດ ແລະ ອອກໃບອະນຸຍາດດ້ານເຕັກນິກໃຫ້ແລ້ວ:

✓ ຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ກໍຈະໄດ້ຮັບອີເມວແຈ້ງເຕືອນໃຫ້ຮັບຊາບວ່າ ໃບສະເໜີຂໍ ໃບອະນຸຍາດ ດ້ານເຕັກນິກຂອງທ່ານໄດ້ຖືກອະນຸມັດເປັນທີ່ຮຽບຮ້ອຍແລ້ວ.

✓ ຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ສາມາດເຂົ້າສູ່ລະບົບ ແລະ ຄົ້ນຫາໃບອະນຸຍາດດ້ານເຕັກນິກນັ້ນໄດ້ໂດຍການຄົ້ນຫາດ້ວຍລະຫັດໃບອະນຸຍາດ ຫຼື ຄົ້ນກາຫາໃບອະນຸຍາດທັງໝົດ.




17. ຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ສາມາດກວດເບິ່ງທຸກໆຂັ້ນຕອນຂອງໃບສະເໜີ ໂດຍກົດໃຊ້ປຸ່ມ "ການບັນທຶກເຫດການ / Event Log"




18. ຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ດາວໂຫຼດ /ພິມ , ຈາກນັ້ນໃບອະນຸຍາດດ້ານເຕັກນິກ ກໍ່ຈະສະແດງອອກມາໜ້າຈໍ.



### ຕົວຢ່າງ ໃບອະນຸຍາດນຳເຂົ້າທາງດ້ານເຕັກນິກຍານພາຫະນະ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
LAO PEOPLE'S DEMOCRATIC REPUBLIC
PEACE INDEPENDENCE DEMOCRACY UNITY PROSPERITY

/ Ministry of Public Work and Transport
/ Department of Transport — / Reference No: 00093351 — / DOT
/ Vientiane — / Date 24/08/2018

**ໃບອະນຸຍາດນຳເຂົ້າທາງດ້ານເຕັກນິກຍານພາຫະນະ / Vehicle Technical Import License**

- / Reference to Land Traffic Law, Issued No:23/NA. Dated:12 Dec 2012
- / Reference to Import License No: 00093149 / DIMEX, / Date: 24/08/2018
-
-

/ The Department of Transport grants the import Vehicle Technical Approval to:

EO D4R14 TEST — / Telephone : 021256252 / Fax : 021000000

1. / **Purpose of Import :** / Permanent
2. / **Specifications**

| | | | |
|---|---|---|---|
| / Classification: CBU | / Model Year: 2018 | / Steering: C | / Seat : 1 |
| / Maker: WAVE i | / Wheel:2 | / Axle: 0 | / Technical condition: ☐80% ☐100% |
| / Model: AFS110MSFJ LO | / Energy : | / Gazoline | |
| / Displacement : 250CC | / Gross: 17248 (kg); | / Curb: 0 (kg); | |
| / Dimensions: / Height: 300 (mm); | / Length: 1500 (mm); | / Width:100 (mm); | |

3. / **Vehicle Identity**

| / No | / Engine Number | / Chassis Number | / Color |
|---|---|---|---|
| 1 | JF72E-210178860 | MLHJF72BXJ5101947 | BLV |
| 2 | JF72E-210178861 | MLHJF72BXJ5101948 | BLV |
| 3 | JF72E-210178862 | MLHJF72BXJ5101949 | BLV |
| 4 | JF72E-210178863 | MLHJF72BXJ5101950 | BLV |
| 5 | JF72E-210178864 | MLHJF72BXJ5101951 | BLV |
| 6 | JF72E-210178865 | MLHJF72BXJ5101952 | BLV |
| 7 | JF72E-210178866 | MLHJF72BXJ5101953 | BLV |
| 8 | JF72E-210178867 | MLHJF72BXJ5101954 | BLV |
| 9 | JF72E-210178868 | MLHJF72BXJ5101955 | BLV |
| 10 | JF72E-210178869 | MLHJF72BXJ5101956 | BLV |
| 11 | JF72E-210178870 | MLHJF72BXJ5101957 | BLV |
| 12 | JF72E-210178871 | MLHJF72BXJ5101958 | BLV |
| 13 | JF72E-210178872 | MLHJF72BXJ5101959 | BLV |
| 14 | JF72E-210178873 | MLHJF72BXJ5101960 | BLV |
| 15 | JF72E-210178874 | MLHJF72BXJ5101961 | BLV |
| 16 | JF72E-210178875 | MLHJF72BXJ5101962 | BLV |
| 17 | | | |
| 18 | | | |
| 19 | | | |
| 20 | | | |

4. **/ Remark**

1) / The vehicles must be imported before 24/11/2018
2) / Custom Clearance Office : RSC10

/ Director General

## V. ການຕໍ່ອາຍຸໃບອະນຸຍາດນຳເຂົ້າ / Import License

ໃບອະນຸຍາດນຳເຂົ້າແມ່ນມີອາຍຸການໃຊ້ງານ 90ວັນ ນັບແຕ່ມື້ໄດ້ຮັບອະນຸມັດ, ກໍລະນີ ຫມົດກຳນົດ (ເກີນ90ວັນ), ທ່ານສາມາດຂໍຕໍ່ອາຍຸການໃຊ້ງານໄດ້ໃໝ່, ແຕ່ສາມາດຕໍ່ໄດ້ພຽງຄັ້ງດຽວ ແລະ ຄັ້ງທີ່ສອງນັ້ນ ຈະມີອາຍຸການໃຊ້ງານພຽງແຕ່ 30ວັນ ເທົ່ານັ້ນ.

## ຂັ້ນຕອນການຕໍ່ອາຍຸໃບອະນຸຍາດ

ຜູ້ນຳເຂົ້າ / ຜູ້ສົ່ງອອກ ແລະ ຜູ້ບໍລິການແຈ້ງພາສີ (ຊິບປິ້ງ) ເຂົ້າສູ່ລະບົບໂດຍປະຕິບັດ ຕາມຂັ້ນຕອນທີ 1 ຫາທີ່ 5 (ໃນຂໍ້ I ທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ).

1. ເລືອກໃບອະນຸຍາດທີ່ຕ້ອງການຕໍ່ອາຍຸ
2. ກົດໃສ່ປຸ່ມ "ຕໍ່ອາຍຸ"




3. ກົດໃສ່ປຸ່ມ "ສົ່ງ" , ໃບສະເໜີຈະຖືກສົ່ງໄປຍັງໜ່ວຍງານທີ່ກ່ຽວຂ້ອງເພື່ອກວດສອບ ແລະ ອະນຸມັດການຕໍ່ອາຍຸ




4. ຫຼັງຈາກການຕໍ່ອາຍຸໄດ້ຖືກອະນຸມັດແລ້ວ, ວັນທີໝົດກຳນົດໃໝ່ (ວັນທີໃຫມ່) ກໍ່ຈະສະແດງຢູ່ໃນໃບອະນຸຍາດ

ຕົວຢ່າງ:



Lao People's Democratic Republic
Peace Independence Democracy Unity Prosperity

Ministry of Industry and Commerce
Department of Import and Export

Ref.no:00069094
Date:29/06/2018

DIMEX.IMEXDIV

**Import License**

I. Applicant Details

Name: ... Applicant 1777777777 Date: 29/06/2018
Address: Village / District / Province
Telephone or Fax: 020 23626265 / 021
Email: nazatest1990@gmail.com

II. Exporter Details

Company:
Address:
Country: Thailand
Telephone or Fax:
Email:

III. End User Details

Name:
Address:
Telephone or Fax: 020 23626265 / 021

IV. Import Details

Import: IM7
Type of Import: 40
Reference Documents, in case of Exemption or Other:
Approval — Date:
Approval — Date:
Approval — Date:

| No. | Description of Goods | HS Code | | | Currency | Total Value |
|---|---|---|---|---|---|---|
| 1 | 87.09). (8701) > - (870120) > - - (CKD) (87012010000) | 87012010 | 2.00 | 5000.00 | Lao kip | 10,000.00 |
| | | | | | Total | 10,000.00 |

Customs Clearance Office:
29/09/2018
Import License Extended until: 29/10/2018 — 06

On behalf of Director General
Director General

Remark:
1. Submission of false information shall result in penalties.
2. Do not alter or modify without authorization.

1